ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 1160 /ຫຄຊກລ
ນະຄອນຫລວງວຽງຈັນ, ວັນທີ 29 ຕຸລາ 2024

# ບົດບັນທຶກ
# ກອງປະຊຸມວິຊາການ
# ໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ປະຈຳໄຕມາດມາດ 04,2024

1. **ວັນເວລາ,ສະຖານທີ່,ຜູ້ເຂົ້າຮ່ວມ**

ໃນຕອນເວລາ 8 ໂມງ 30 ນາທີ ຂອງວັນທີ 25 ກັນຍາ 2024 ສະຖານທີ່ ໂຮງແຮມລາວພາຊາ ນະຄອນຫຼວງວຽງຈັນ ໄດ້ຈັດກອງປະຊຸມ ວິຊາການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ປະຈຳໄຕມາດ 04,2024 ພາຍໃຕ້ການເປັນປະທານ ຂອງ ທ່ານ ດວງສີ ທຳມະວົງ ຮອງຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄ້ອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ມີຜູ້ເຂົ້າຮ່ວມ ຕາງໜ້າກົມສາສຶກສາ, ຕາງກົມສ້າງຄູ, ຕາງໜ້າກົມຮ່ວມມືຕ່າງປະເທດ, ຕາງໜ້າກົມການສຶກສານອກໂຮງຮຽນ, ຕາງໜ້າກົມກິລາມວນຊົນ ພາລະສຶກສາ ແລະ ສິນລະປະ, ກະຊວງສຶກສາທິການ ແລະ ກິລາ, ຕາງໜ້າກົມສື່ມວນຊົນ ກະຊວງ ຖະແຫຼງຂ່າວວັດທະນາທຳ ແລະ ທ່ອງທ່ຽວ, ຕາງໜ້າກົມຂະບວນການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ວິທະຍຸກະຈາຍສຽງແຫ່ງຊາດ, ໂຄງການເກັບກູ້ລະເບີດແຫ່ງຊາດ, ກອງກວດກູ້ເພື່ອມະນຸດສະທຳກອງທັບ 58, ອົງການ ຮາໂລທຣັດ, ອົງການຊ່ວຍເຫຼືອຂອງປະຊາຊົນນ໊ອກແວ, ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ, ອົງການແມັກເກັບກູ້ລະເບີດ, ອົງການເວີດອີດູເຄເຊິນ, ບໍລິສັດບໍ່ຄຳເຊໂປນ, ໜ່ວຍງານແຜນການ, ໜ້າໜ່ວຍງານຄຸ້ມຄອງຂໍ້ມູນ, ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຫ້ອງການ ຄຊກລ ເຂົ້າຮ່ວມທັງໝົດ 34 ທ່ານ ຍິງ 19 ທ່ານ.

2. **ຈຸດປະສົງ.**

- ເພື່ອທົບທວນຜົນຂອງກອງປະຊຸມວິຊາການໂຄສະນາສຶກສາຄວາມສ່ຽງ ຈາກ ລບຕ ໃນໄຕມາດ 03 ທີ່ເອກະພາບກັນ ບັນຫາໃດທີ່ສາມາດຈັດຕັ້ງປະຕິບັດສຳເລັດ ແລະ ຂໍ້ຄົງຄ້າງ;
- ລາຍງານການເຄື່ອນໄຫວ ການຈັດຕັ້ງປະຕິບັດວຽກງານຜົນສຳເລັດ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ 10 ເດືອນ ແລະ ທິດທາງແຜນປີ 2025;
- ອັບເດດສະຖິຕິການເກີດອຸປະຕິເຫດ ຈາກ ລບຕ ຜູ້ຮັບບາດເຈັບ ແລະ ເສຍຊີວິດ ປະຈຳໄຕມາດ 3, 2024,
- ອັບເດດຂະບວນການປັບປຸງມາດຕະຖາດແຫ່ງຊາດ ບົດທີ13 ທີ່ຕິດພັນກັບວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ;
- ການເຊື່ອມສານບົດບາດຍິງຊາຍໃນຂະ ແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ
- ຜົນການຄົ້ນຄວ້າການສຳຫຼວດ ທັດສະນະຄະຕິການປ່ຽນແປງພຶດຕິກຳສ່ຽງຈາກ ລບຕ (KAP Survey).
- ປຶກສາຫາລື ວຽກໂຄສະນາຢູ່ ບ້ານ, ແຂວງ ທີ່ເກີດອຸປະຕິເຫດຈາກ ລບຕ ແຕ່ບໍ່ມີອົງການປະຕິບັດງານ.

3. ເນື້ອໃນກອງປະຊຸມ

ນຳສະເໜີຜົນກອງປະຊຸມໃນໄຕມາດ 03 ອັນໃດທີ່ສາມາດຈັດຕັ້ງປະຕິບັດໄດ້ ແລະ ຄວນຈະສືບຕໍ່ ລາຍງານ ຜົນສຳເລັດວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ 10 ເດືອນ ແຜນປີ 2025 ເພື່ອໃຫ້ທີ່ປະຊຸມໄດ້ຮັບຊາບ, ຄວາມຄືບໜ້າໃນການປັບປຸງມາດຕະຖານແຫ່ງຊາດ, ການຮ່າງຕົວຊີ້ວັດ ແຜນຍຸດທະສາດແຫ່ງຊາດ ວ່າດ້ວຍ ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, ໄລຍະ 2021-2030, ໂດຍສະເພາະ ຕົວຊີ້ວັດ ທີ່ກ່ຽວຂ້ອງກັບວຽກງານ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ, ເພື່ອຮັບປະກັນໃຫ້ປະຊາຊົນດຳລົງຊີວິດໃນຂອບເຂດທີ່ມີຄວາມສ່ຽງໄພ ຈາກ ລບຕ, ວຽກງານການແກ້ໄຂບັນຫາ ລບຕ ໄດ້ຮັບການພັດທະນາຢ່າງມີຄວາມເຂັ້ມແຂງ ແລະ ມີປະສິດທິພາບ, ປະຊາຊົນບັນດາເຜົ່າໄດ້ຮັບຮູ້ ແລະ ເຂົ້າໃຈດີເຖິງຄວາມອັນຕະລາຍ ຂອງ ລບຕ ຊຸມຊົນມີຄວາມປອດໄພກວ່າເກົ່າ ແລະ ຫຼຸດຜ່ອນການເສຍຊີວິດ, ຮັບປະກັນໃຫ້ຫຼຸດຈຳນວນຜູ້ບາດເຈັບ ແລະ ເສຍຊີວິດ ໃຫ້ຕ່ຳກວ່າ 380 ຄົນ (ສະເລ່ຍໃຫ້ ຕ່ຳກວ່າ 38ຄົນ/ປີ).

ຄວາມຄືບໜ້າ ກ່ຽວກັບ ວຽກງານການເຊື່ອມສານບົດບາດ ຍິງ-ຊາຍ ໃນຂະແໜງການ ລບຕ ຢູ່ ສປປ ລາວ ໃຫ້ທີ່ປະຊຸມໄດ້ຮັບຮູ້ ຜົນການສຶກສາ ແລະ ແຜນດຳເນີນງານ ດ້ານບົດບາດ ຍິງ-ຊາຍ ໃນຂະແໜງ ການ ລບຕ ສະບັບພາສາລາວ ແລະ ພາສາອັງກິດ, ພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຜູ້ປະສານງານດ້ານບົດບາດ ຍິງ-ຊາຍ ໄດ້ຮັບການອະນຸມັດຈາກ ກະຊວງ ການຕ່າງປະເທດ ຢ່າງເປັນທາງການ, ຜູ້ປະສານງານ ບົດບາດຍິງ-ຊາຍ ປະກອບດ້ວຍ: ຫ້ອງການ ຄຊກລ, ສະຫະພັນແມ່ຍິງລາວ, ໂຄງການເກັບກູ້ລະເບີດແຫ່ງຊາດ, ກອງກວດກູ້ເພື່ອມະນຸດສະທຳ ກອງ 58. ພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຜູ້ປະສານງານດ້ານບົດບາດ ຍິງ-ຊາຍ ໃນກຸ່ມວິຊາການ ຂອງຂະແໜງການ ລບຕ ໄດ້ຮັບການອະນຸມັດຈາກ ຫ້ອງການ ຄຊກລ ກຸ່ມວິຊາການ ວຽກໂຄສະນາໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຜູ້ປະສານງານ 2 ທ່ານ: ທ່ານ ນາງ ບົວລາ ທອງສະຫວັນ, ທ່ານ ວິໄລສັກ ໄຊຊະນະ ອົງການ ເຫັດໄອ.

ກອງປະຊຸມໄດ້ມີການປຶກສາຫາລືກັນ ກ່ຽວກັບ ການສ້າງຕົວຊີ້ວັດ ແຜນຍຸດທະສາດແຫ່ງຊາດ, ໂດຍສະເພາະຕົວຊີ້ວັດ ຂອງວຽກງານ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ແລະ ກອງປະຊຸມ ໄດ້ມີການປະກອບຄຳຄິດຄຳເຫັນດັ່ງຕໍ່ໄປນີ້:

- ການສ້າງຕົວຊີ້ວັດ ຄວນລະບຸຢ່າງຈະແຈ້ງວ່າ ຕ້ອງການວັດແທກຜົນໄດ້ຮັບຂອງພາກສ່ວນໃດ: ຂອງຫ້ອງການ ຄຊກລ, ຂອງອົງການປະຕິບັດງານ ຫຼື ຂອງຂະແໜງການ.
- ການຕັ້ງເປົ້າໝາຍ ຄວນມີບ່ອນອ້າງອີງ ແລະ ສາມາດອະທິບາຍໄດ້ວ່າ ອີງໃສ່ ຂໍ້ມູນ ຫຼື ການຄົ້ນຄ້ວາ ໂຕໃດ.
- ການເກັບກຳຂໍ້ມູນ ຄວນລະບຸຢ່າງລະອຽດ ແລະ ຈະແຈ້ງ ກ່ຽວກັບ ຂອບເຂດການເກັບກຳຂໍ້ມູນ ເຊັ່ນ: ຈະລວມເອົາໂຮງຮຽນອະນຸບານ, ປະຖົມ ຫຼື ມັດທະຍົມ.

  ພາກສ່ວນທີ່ກ່ຽວຂ້ອງຂອງຫ້ອງການ ຄຊກລ ຈະນຳເອົາການປະກອບຄຳຄິດຄຳເຫັນ ໄປປັບປຸງຮ່າງຕົວຊີ້ວັດ. ຫຼັງຈາກນັ້ນ, ກໍຈະໄດ້ມີການຂໍອະນຸມັດນຳໃຊ້ຕົວຊີ້ວັດດັ່ງກ່າວ ຈາກກະຊວງການຕ່າງປະເທດ. ຄາດຄະເນວ່າ ຈະສາມາດນຳໃຊ້ ແລະ ເລີ່ມເກັບກຳຂໍ້ມູນ ນັບແຕ່ຕົ້ນປີ 2025 ເປັນຕົ້ນໄປ.

ພ້ອມກັນນັ້ນ, ຍັງໄດ້ມີການອັບເດດຈຳນວນອຸປະຕິເຫດທີ່ເກີດຈາກ ລບຕ ໃນໄຕມາດ 1 ຫາໄຕມາດ 04 ມີທັງໝົດ 25 ກໍລະນີ ມີຜູ້ໄດ້ຮັບເຄາະທັງໝົດ 48 ຄົນ, ຊາຍ 29 ຄົນ, ຍິງ 10 ຄົນ ໃນນັ້ນ ເສຍຊີວິດ 9 ຄົນ, ເດັກນ້ອຍ 6, ຜູ້ໃຫ່ຍ 3 ຄົນ ສາເຫດເກີດອຸປະຕິເຫດຂຸດດິນເຮັດສວນ,ຫຼິ້ນລະເບີດ ແລະ ດັ່ງໄຟ.

ປີກສາຫາລືໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ແຂວງທີ່ບໍ່ມີອົງການປະຕິບັດງານ ແຕ່ມີອຸປະຕິເຫດເກີດຂຶ້ນໂດຍສະເພາະ ແຂວງໄຊຍະບຸລີ ປີນີ້ ເກີດອຸປະຕິເຫດ 2 ຄັ້ງແລ້ວ ໃຫ້ກອງກວດກູ້ເພື່ອມະນຸດສະທຳ 58 ກອງທັບ ໂຄສະນາໂດຍສົມທົບກັບຫ້ອງການ ຄຊກລ ເຊິ່ງວ່າປີນີ້ອຸປຕິເຫດເກີດຂຶ້ນຫຼາຍ ເກີນແຜນຍຸດທະສາດແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ແລະ ເປັນບັນຫາສິ່ງທ້າທາຍສຳລັບວຽກງານໂຄສະນາ ພວກເຮົາຮູ້ແລ້ວ ວ່າອຸປະຕິເຫດສ່ວນໃຫ່ຍເກີດຈາກການຂຸດດິນເຮັດສວນມັນຕົ້ນ ສະນັ້ນ, ພວກເຮົາຕ້ອງເຮັດຈຸດສຸມ ກຸ່ມເປົ້າໝາຍ ດັ່ງກ່າວ.

4. ທິດທາງແຜນການ

4.1. ວາງແຜນສຸມໃສ່ການໂຄສະນາສຶກສາກຸ່ມເປົ້າໝາຍ ເຮັດເປັນເຂດສະເພາະບ່ອນທີ່ປະຊາຊົນປູກມັນຕົ້ນຫຼາຍ ໂດຍອີງໃສ່ ແຜນຍຸດທະສາດວ່າການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວໃນວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ເພື່ອໃຫ້ຫຼຸດຜ່ອນຈຳນວນ ຜູ້ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກໃຫ້ຕ່ຳກວ່າ 38 ຄົນຕໍ່ປີ;

4.2. ເຮັດໃຫ້ວຽກງານໂຄສະນາ ສຶກສາຄວາມສ່ຽງໄພ ຈາກ ລບຕ ເຂັ້ມແຂງ ແລະ ມີປະສິດທິພາບ, ປະຊາຊົນບັນດາເຜົ່າໄດ້ຮັບຮູ້ ແລະ ເຂົ້າໃຈດີເຖິງຄວາມອັນຕະລາຍ ຂອງ ລບຕ ຊຸມຊົນມີຄວາມປອດໄພກວ່າເກົ່າ ແລະ ຫຼຸດຜ່ອນການເສຍຊີວິດ;

4.3. ຈັດກອງປະຊຸມສະເພາະເຜີຍແຜ່ຜົນການຄົ້ນຄວ້າການສຳຫຼວດ ທັດສະນະຄະຕິການປ່ຽນແປງພຶດຕິກຳສ່ຽງຈາກ ລບຕ (KAP Survey) ໃຫ້ບັນດາອົງການປະຕິບັດງານນຳໄປຈັດຕັ້ງປະຕິດບັດ ຂໍ້ໃດທີ່ເຫັນວ່າມັນຕິດພັນ, ສອດຄ່ອງ ແລະ ເໝາະສົມກັບສະພາບຄວາມເປັນຈິງ;

4.4. ປະຊຸມສະເພາະເພື່ອລົງເລິກກ່ຽວກັບປັບປຸງມາດຕະຖານແຫ່ງຊາດໂດຍສະເພາະແມ່ນບັນດາໂຕຊີ້ວັດວຽກໂຄສະນາ;

4.5. ສືບຕໍ່ລາຍງານຄວາມຄືບໜ້າຂະບວນການປັບປຸງມາດຕະຖານແຫ່ງຊາດ ທີ່ຕິດພັນກັບວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ເພື່ອໃຫ້ສຳເລັດໃນທ້າຍປີນີ້;

4.6. ສືບຕໍ່ລາຍງານຄວາມຄືບໜ້າໃນການເຊື່ອມສານົດບາດຍິງຊາຍທີ່ເປັນຈຸດປະສານງານເຂົ້າໃນວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ;

4.7. ສືບຕໍ່ໃຫ້ອົງການປະຕິບັດງານສັງລວມຂໍ້ມູນ ກ່ຽວກັບການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ເປັນຕົ້ນແມ່ນ ສື່ພິມ, ໂປສະເຕີ, ລະຄອນເລື່ອງສັ້ນ, ວີດີໂອ ສົ່ງເຂົ້າໃນຫໍສະໝຸດດິຈິຕອນ (E-library) ຫ້ອງການ ຄຊກລ;

4.8. ແຜນປີ 2025 ໃຫ້ອົງການປະຕິບັດງານໃຫ້ໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ເພື່ອຈະໄດ້ຕິດຕາມການຈັດຕັ້ງປະຕິບັດ.

5. ຄຳເຫັນຊີ້ນຳຂອງປະທານ:

5.1. ເຫັນດີໃຫ້ໃຫ້ ໂຄສະນາທາງໂທລະໂຄ່ງໂຮງຮຽນ ໃນໂຮງຮຽນສາຍສາມັນ ຫຼື ໂຄສະນາໃຫ້ຄວາມຮູ້ລະເບີດບໍ່ທັນແຕກ ຄືອບສຽງຜ່ານຕູ້ລຳໂພງຂອງໂຮງຮຽນສາຍສາມັນ ຢ່າງໜ້ອຍ ອາທິດໜຶ່ງ 2 ຄັ້ງ;

5.2. ໃຫ້ໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຮ່າງໜັງສືແຈ້ງການ ຫາບັນອົງການປະຕິບັດງານສົ່ງຂໍ້ມູນເຂົ້າໃນຫໍສະໝຸດດິຈິຕອນ (E-library) ຫ້ອງການ ຄຊກລ ເພື່ອເປັນສູນລວມຂໍ້ມູນໃນການຄຸ້ມຄອງສື່ໂຄສະນາ;

5.3. ສະເໜີໃຫ້ອົງການປະຕິບັດງານທົບທວນຄືນ ນັກໂຄສະນາ ອາດຈະເປັນການຝຶກອົບ ຜູ້ທີ່ຈະເອົາຄວາມຮູ້ ລບຕ ນຳໄປເຜີຍແຜ່ໂຄສະນາ ພ້ອມກັບມາຜ່ານຫ້ອງການ ຄຊກລ ເພື່ອຕິດຕາມ ແລະ ຄຸ້ມຄອງຕາມພາລະບົດບາດ;

5.4. ໃຫ້ເພີ່ມທະວີໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ເຮັດເປັນຈຸດສຸມ ກຸ່ມເປົ້າໝາຍຮູ້ວ່າ ອຸປະຕິເຫດສ່ວນຫຼາຍເກີດຈາກ ການຂຸດດິນເພື່ອເຮັດສ່ວນມັນຕົ້ນ ສະນັ້ນ; ສະເໜີໃຫ້ອົງການປະຕິບັດງານ ທີ່ເຮັດວຽກໂຄສະນາ ກຳນົດ, ວາງແຜນເດືອນໃດ, ໄລຍະໃດ, ອຸປະຕິເຫດເກີດຂຶ້ນຫຼາຍ, ຕິດພັນກັບລະດູການຜະລິດ, ລະດູການເກັບກູ້ມັນຕົ້ນ, ລະດູການເຮັດກະສິກຳ ຕ້ອງວິເຄາະ ວິໄຈອອກມາ ແລ້ວໄປໂຄສະນາບ້ານທີ່ມີຄວາມສ່ຽງດັ່ງກ່າວ;

5.5. ເຫັນດີໃຫ້ເອົາຜົນການຄົ້ນຄວ້າການສຳຫຼວດ ທັດສະນະຄະຕິການປ່ຽນແປງພຶດຕິກຳສ່ຽງຈາກ ລບຕ (KAP Survey) ນຳໄປຈັດຕັ້ງປະຕິບັດຂໍ້ໃດທີ່ເຫັນວ່າຕິດພັນ, ສອດຄ່ອງກັບກິດຈະກຳ ແລະ ສະພາບຄວາມເປັນຈິງ:

- ນຳໃຊ້ທິດສະດີການປ່ຽນແປງເຂົ້າໃນວຽກງານໂຄສະສາສຶກສາຄວາມສ່ຽງໄພ ຈາກ ລບຕ ໂດຍສະເພາະຄວາມເຂົ້າໃຈກ່ຽວກັບ ຜົນໄດ້ຮັບທີ່ຕາມ ມາຈາກການໂຄສະນາປ່ຽນແປງພຶດຕິກຳສ່ຽງ;
- ກຳນົດເວລາໃນການຈັດຕັ້ງປະຕິບັດວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໄວ້ໃນມາດຕະຖານແຫ່ງຊາດ ເພື່ອລຶກເວັ້ນ ຈຳກັດດ້ານຊົ່ວໂມງ, ເພື່ອຮັບປະກັນວ່າການລົງໂຄສະນາ ສຳລັບຊຸມຊົນແມ່ນສາມາດເຂົ້າເຖິງປະຊາຊົນ ໂດຍສະເພາະກຸ່ມຜູ້ໃຫ່ຍ ແລະ ຊຸກຍູ້ໃຫ້ຈັດຕັ້ງປະຕິບັດວຽກໂຄສະນາ ມັນການຕອບຄຳ ແລະ ຕິດຕາມໂດຍຜ່ານການຮັບຮອງ ແລະ ຮັບປະກັນທາງດ້ານເນື້ອໃນ;
- ກຳນົດກຸ່ມເປົ້າໝາຍຜູ້ເຂົ້າຮ່ວມໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ສູງສຸດ ແມ່ນ 20 ຄົນຕໍ່ກຸ່ມຕໍ່ຄັ້ງ;
- ພັດທະນາເບີໂທສາຍດ່ວຍຂອງຫ້ອງການ ຄຊກລ (1603) ໃຫ້ບໍລິການໄດ້ 24 ຊົ່ວໂມງໃຫ້ມີການໂທກັບຄືນເມື່ອສາຍໂທເຂົ້າທີ່ບໍ່ໄດ້ຮັບ ແລະ ປະກາດໃຊ້ເບີໂທສາຍດ່ວນຢ່າງເປັນທາງການ;
- ບໍ່ໃຫ້ຖືເອົາວຽກໂຄສະນາ ເປັນຜະລິດຕະພັນໃດໜຶ່ງເທົ່ານັ້ນ, ໃຫ້ມີການຄຸ້ມຄອງກວດກາຄຸນນະພາບ, ມີການຮັບຮອງ ແລະ ໄດ້ມາດຕະຖານແຫ່ງຊາດ ເພື່ອຮັບປະກັນວ່າວຽກໂຄສະນາດຳເນີນການແທດອໝາະກັບຈຸດປະສົງ;
- ພຶດທິກຳທີ່ມີຄວາມສ່ຽງແບບຕັ້ງໃຈ ບໍ່ໄດ້ຖືກລາຍງານວ່າເປັນກຸ່ມສ່ຽງຫລັກກໍ່ຕາມ ໃຫ້ສຸມໃສໂຄສະນາ ເພື່ອຊອກຫາວິທີ ທີ່ສອດຄ່ອງ ແລະ ເໝາະສົມກັບພາບຄວາມເປັນຈິງໃນທ້ອງຖິ່ນ, ຕິດພັນກັບການດຳລົງຊີວິດ;
- ໃຫ້ພິຈາລະນາການຝຶກອົບຮົມ ການບໍລິຫານຈັດການ ແລະ ຄຸ້ມຄອງວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໃຫ້ແກ່ຫ້ອງການ ຄຊກລ ແລະ ອົງການປະຕິບັດງານທີ່ເຮັດວຽກໂຄສະນາສສຶກສາຄວາມສ່ຽງໄພ ຈາກ ລບຕ.

ກອງປະຊຸມໄດ້ສິ້ນສຸດໃນເວລາ 12:38 ໂມງໃນຕອນແລງຂອງວັນ 25 ຕຸລາ 2024.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມເຫັນສົມຄວນດ້ວຍ.

ປະທານກອງປະຊຸມ

ຫ້ອງການ ຄຊກລ

ດວງສີ ທຳມະວົງ

ຜູ້ບັນທຶກ

ຈັນສະໝອນ ສີຫາລາດ